ບົດລາຍງານໂດຍຫຍໍ້
ກ່ຽວກັບການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ
ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII (ວັນທີ 7-21/12/2011)
ລາຍງານ ວັນທີ 8 / 12 / 2011 ທີ່ຫໍສະພາແຫ່ງຊາດ.
ລາຍງານໂດຍ: ທ່ານ ດຣ ພັນຄຳ ວິພາວັນ, ກຳມະການກົມການເມືອງສູນກາງພັກ,
ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ຮຽນ: - ທ່ານ ນາງ ປານີ ຢາທໍ່ຕູ້, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ

- ບັນດາທ່ານ ຄະນະປະຈຳ ສະພາແຫ່ງຊາດ ທີ່ນັບຖື !
- ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ນັບຖື !
- ບັນດາທ່ານແຂກ ພາຍໃນ ແລະ ຕ່າງປະເທດ ທີ່ນັບຖື !

ກ່ອນອື່ນ ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄະນະພັກ, ຄະນະນຳກະຊວງສຶກສາທິການ ແລະ ກິລາ, ພະນັກງານ, ຄູອາຈານ, ນັກຮຽນ-ນັກສຶກສາ ທົ່ວຂະແໜງການສຶກສາ ແລະ ກິລາ ຂໍນຳເອົາຄວາມຄຳນັບຊົມເຊີຍມາຍັງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VII ຊຶ່ງໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ພາຍຫຼັງທີ່ທົ່ວປະເທດ ໄດ້ຈັດຕັ້ງສະເຫຼີມສະຫຼອງ ວັນສະຖາປະນາສາທາລະນະລັດປະຊາທິປະໄຕປະຊາຊົນລາວ ວັນທີ 2 ທັນວາ ຄົບຮອບ 36 ປີ, ວັນຄ້າຍວັນເກີດຂອງທ່ານປະທານໄກສອນ ພົມວິຫານ ຜູ້ນຳອັນແສນເຄົາລົບຂອງພວກເຮົາ ຄົບຮອບ 91 ປີ, ຂໍຊົມເຊີຍຢ່າງສຸດອົກສຸດໃຈ (ຕົບມືຊົມເຊີຍ). ພ້ອມດຽວກັນນີ້ ກໍ່ຂໍສະແດງຄວາມຂອບອົກ ຂອບໃຈເປັນຢ່າງສູງ ມາຍັງທ່ານປະທານ ແລະ ຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ອະນຸຍາດ ໃຫ້ກະຊວງສຶກສາທິການ ແລະ ກິລາ ລາຍງານກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ ຕໍ່ກອງປະຊຸມທີ່ມີຄວາມໝາຍ, ຄວາມສຳຄັນ ໃນມື້ນີ້ ນີ້ກໍ່ສະແດງໃຫ້ເຫັນຢ່າງເອົາຈິງເອົາຈັງ ທີ່ເປັນຮູບປະທຳ ຂອງພັກ ແລະ ລັດຖະບານ ທີ່ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານການສຶກສາ ແລະ ກິລາ, ເຮັດໃຫ້ວຽກງານການສຶກສາ ແລະ ກິລາ ກາຍເປັນຄວາມຮັບຜິດຊອບຂອງທົ່ວປວງຊົນໃນສັງຄົມ. ໃນໂອກາດ ທີ່ມີຄວາມໝາຍ, ຄວາມສຳຄັນນີ້ ຂ້າພະເຈົ້າ ຂໍອະນຸຍາດລາຍງານໂດຍຫຍໍ້ ກ່ຽວກັບການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ I (2006- 2010) ໂດຍຈະເນັ້ນໜັກສິ່ງທີ່ເປັນຈຸດອ່ອນ, ຂໍ້ຄົງຄ້າງ, ບັນຫາພົ້ນເດັ່ນຊຶ່ງເປັນສິ່ງທ້າທາຍ ຕໍ່ການສຶກສາ ແລະ ທິດທາງບາງວຽກຈຸດສຸມຂອງການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ II (2011-2015) ຕໍ່ກອງປະຊຸມ ເນື້ອໃນລະອຽດ ຂໍລາຍງານ ດັ່ງນີ້:

## I. ສະພາບ ແລະ ຄວາມເປັນມາຂອງການການປະຕິຮູບລະບົບການສຶກສາແຫ່ງຊາດ :

ໄລຍະທີ່ຜ່ານມາ ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ຕໍ່ວຽກງານການສຶກສາ ຢ່າງເປັນລະບົບຕໍ່ເນື່ອງ ແລະ ເອົາຈິງເອົາຈັງ ສະແດງອອກຢູ່ມະຕິຂອງພັກໃນແຕ່ລະໄລຍະ ໄດ້ເນັ້ນ ເຖິງພາລະບົດບາດ, ໜ້າທີ່ ແລະ ທິດທາງກ່ຽວກັບການພັດທະນາການສຶກສາ, ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກໄດ້ກຳນົດ

ແນວທາງກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການຂອງພັກ ເພື່ອແນໃສ່ນຳເອົາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020, ການພັດທະນາເສດຖະກິດ-ສັງຄົມໄດ້ຖືເອົາການພັດທະນາການສຶກສາເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ(ພັດທະນາຄົນ) ເພາະຄົນເປັນຜູ້ພັດທະນາປະເທດຊາດ, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກຍັງໄດ້ກຳນົດແຈ້ງຕື່ມວ່າ: ໃຫ້ຮີບຮ້ອນດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ.

ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ຢືນຢັນ ແລະ ໃຫ້ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດ ໂດຍໃຫ້ຄວາມສຳຄັນແກ່ການຍົກສູງຄຸນນະພາບ ໄປຄຽງຄູ່ກັບການຂະຫຍາຍໂອກາດ ດ້ານການສຶກສາ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ຮັບປະກັນໃຫ້ການສຶກສາດຳເນີນໄປຢ່າງກົມກຽວ ຕາມ ສາມລັກສະນະການສຶກສາຂອງພັກ ຄື : ລັກສະນະຊາດ, ວິທະຍາສາດ - ທັນສະໄໝ ແລະ ລັກສະນະມະຫາຊົນ ແລະ ຮັບປະກັນ ຫ້າ ຫຼັກມູນການສຶກສາຂອງພັກຄື : ຄຸນສົມບັດສຶກສາ, ປັນຍາສຶກສາ, ສິນລະປະສຶກສາ, ພະລະສຶກສາ ແລະ ແຮງງານສຶກສາ. ຖືເອົາການພັດທະນາລະບົບການສຶກສາແຫ່ງຊາດ ກໍຄືການສ້າງຄົນເປັນໃຈກາງ ແນໃສ່ບັນລຸເປົ້າໝາຍເຮັດໃຫ້ຄົນລາວເປັນຜູ້ທີ່ມີຄວາມຮູ້ທີ່ແນ່ນອນ, ເປັນພົນລະເມືອງດີຂອງລະບອບປະຊາທິປະໄຕປະຊາຊົນ ແລະ ມີເງື່ອນໄຂພັດທະນາຕົນເອງຮອບດ້ານ.

ໂດຍອີງໃສ່ເນື້ອໃນມະຕິດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ສ້າງແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006- 2015 ຊຶ່ງ ໄດ້ແບ່ງເປັນ 2 ໄລຍະ ຄື: ໄລຍະທີ I (2006-2010) ແລະ ໄລຍະທີ II (2011-2015) ຈຸດໝາຍຂອງການປະຕິຮູບລະບົບການສຶກສາແຫ່ງຊາດແມ່ນ ເພື່ອປັບປຸງຄຸນນະພາບຂອງການສຶກສາ ກໍຄືການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບສູງຂຶ້ນເທື່ອລະກ້າວ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ການປະຕິຮູບລະບົບການສຶກສາແຫ່ງຊາດປະຕິຮູບໄປຕາມ 3 ແຜນງານ ຄື: (1) ແຜນງານຂະຫຍາຍໂອກາດເຂົ້າຮຽນ, (2) ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ, (3) ແຜນງານບໍລິຫານ-ຄຸ້ມຄອງການສຶກສາ ແລະ ດຳເນີນໄປດ້ວຍ 7 ວິທີ ຄື: (1) ປ່ຽນແປງຈຸດໝາຍ, ເນື້ອໃນຫຼັກສູດການສຶກສາຄືນໃໝ່, (2) ພັດທະນາຄູ-ອາຈານ ແລະ ປ່ຽນແປງວິທີສິດສອນຄືນໃໝ່, (3) ປັບປຸງ, ປ່ຽນແປງການຄຸ້ມຄອງການສຶກສາ, (4) ພັທະນາໂຄງປະກອບການສຶກສາແຫ່ງຊາດ ແລະ ພັດທະນາລະບົບໂຮງຮຽນ, ຫ້ອງຮຽນ ແລະ ພື້ນຖານການສຶກສາ, (5) ເພີ່ມງົບປະມານໃຫ້ຂະແໜງການສຶກສາ, (6) ສົ່ງເສີມການສຶກສາໃຫ້ເປັນຂອງທົ່ວສັງຄົມ, (7) ເພີ່ມທະວີການຮ່ວມມືສາກົນ.

ຜ່ານການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ I (2006- 2010) ການສຶກສາແຫ່ງຊາດໄດ້ມີການປ່ຽນແປງດີຂຶ້ນຫຼາຍດ້ານ ນັບທັງດ້ານປະລິມານ ແລະ ຄຸນນະພາບ. ບັນຫາໃໝ່ແມ່ນລະບົບການສຶກສາສາມັນສຶກສາ ໄດ້ເພີ່ມປີຮຽນ ຈາກ 11 ປີ(ລະບົບ 5+3+3) ເປັນ 12 ປີ (ລະບົບ 5+4+3) ສົກຮຽນ 209-2010 ເປັນສົກຮຽນທຳອິດ ນັກຮຽນມັດທະຍົມສຶກສາຕອນຕົ້ນຮຽນຈົບລະບົບ 4 ປີ(ຈົບ ມ.4); ສົກຮຽນ 2010-2011 ເປັນສົກຮຽນທຳອິດນັກຮຽນມັດທະຍົມສຶກສາຕອນປາຍຮຽນຈົບລະບົບ 12 ປີ(ຈົບ ມ.7). ລະບົບອາຊີວະສຶກສາ ນັບທັງສາຍສ້າງຄູ ແລະ ການສຶກສາຊັ້ນສູງ ກໍໄດ້ປັບປຸງ ແລະ ປ່ຽນແປງໄປຄຽງຄູ່ກັບການປັບປຸງລະບົບສາຍສາມັນສຶກສາ. ຫຼັກສູດ ແລະ ເນື້ອໃນການຮຽນ-ການສອນ ທຸກຊັ້ນ, ທຸກສາຍ ນັບທັງໃນໂຮງຮຽນ, ນອກໂຮງຮຽນ ນັບແຕ່ຊັ້ນອະນຸບານຮອດ ມະຫາວິທະ

ຍາໄລ ກໍໄດ້ຮັບການປັບປຸງ ແລະ ພັດທະນາດີຂຶ້ນ. ການບໍລິຫານ ແລະ ຄຸ້ມຄອງການສຶກສາ ໄດ້ຄ່ອຍຫັນເຂົ້າສູ່ການບໍລິຫານ-ຄຸ້ມຄອງ ດ້ວຍລະບຽບຫຼັກການ. ນິຕິກຳຕ່າງໆກ່ຽວກັບຂະແໜງການສຶກສາ ໄດ້ຮັບການປັບປຸງ ແລະ ສ້າງຂຶ້ນໃໝ່ ໂດຍສະເພາະດ້ານນິຕິກຳ ທີ່ເປັນນະໂຍບາຍລວມ ຕໍ່ຖັນແຖວຄູ-ອາຈານສອນ. ໂຄງປະກອບການຈັດຕັ້ງຂອງຂະແໜງການສຶກສານັບແຕ່ຂັ້ນກະຊວງລົງຮອດຂັ້ນ ທ້ອງຖິ່ນ ນັບທັງມະຫາວິທະຍາໄລ ແລະ ສະຖາບັນການສຶກສາທຸກລະດັບ ໄດ້ຮັບການປັບປຸງ ແລະ ປ່ຽນແປງແປງດີຂຶ້ນເປັນແຕ່ລະໄລຍະ. ພິເສດ ພາຍຫຼັງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງ ຊາດຊຸດທີ VII ໄດ້ຮັບຮອງ ເອົາໂຄງປະກອບກົງຈັກການຈັດຕັ້ງຂອງລັດຖະບານ ໃນວັນທີ 15/7/2011 ໜຶ່ງໃນກົງຈັກການຈັດຕັ້ງຂອງລັດຖະບານນັ້ນໄດ້ເອົາວຽກງານກິລາກາຍະກຳແຫ່ງຊາດ ແລະ ວຽກງານສຶກສາ ມາໂຮມເຂົ້າກັນ ເປັນກະຊວງໜຶ່ງ ເອີ້ນຊື່ວ່າ: ກະຊວງສຶກສາທິການ ແລະ ກິລາ, ຕໍ່ນັ້ນມາ ນາຍົກລັດຖະມົນຕີ ໄດ້ອອກດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7/9/2011. ໂຄງປະກອບກົງຈັກການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ ປະກອບມີ 2 ຂັ້ນ ຄື: ຂັ້ນສູນກາງປະກອບມີ 20 ພາກສ່ວນ(ລະດັບເທົ່າກົມ), ຂັ້ນທ້ອງຖິ່ນປະກອບມີ: ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ເທດສະບານ.

ສົກຮຽນ 2011-2012 ນີ້ ເປັນສົກຮຽນເລີ່ມຕົ້ນຂອງການຈັດຕັ້ງຜັນຂະຫຍາຍບຸກທະລຸທັງ 4 ດ້ານ ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ເປັນສົກຮຽນກ້າວເຂົ້າສູ່ການຈັດຕັ້ງປະຕິບັດ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ II (2011- 2015) ແນໃສ່ເຮັດໃຫ້ດ້ານປະລິມານ ແລະ ຄຸນນະພາບຂອງການສຶກສາ ຂະຫຍາຍຕົວຄຽງຄູ່ກັນໄປ ໃນນັ້ນ ຈະເລັ່ງໃສ່ຄຸນນະພາບເປັນຕົ້ນຕໍ ພວກເຮົາໄດ້ເລີ່ມປະຕິຮູບ ວິທີການຊັບຊ້ອນ, ສອບເສັງ ເຂົ້າຮຽນສາຍອາຊີວະສຶກສາ, ມະຫະວິທະຍາໄລ ໃຫ້ເຂົ້າສູ່ລະບົບ ໂດຍບໍ່ໃຫ້ມີລະບົບພິເສດ ແລະ ດັດສົມໂກຕາເຂົ້າຮຽນລະດັບປະລິນຍາຕີ ຢູ່ມະຫາວິທະຍາໄລ; ຊຸກຍູ້ສົ່ງເສີມ ໃຫ້ຄົນເຂົ້າຮຽນວິຊາຊີບ ລະດັບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ຢູ່ຕາມສະຖາບັນອາຊີວະສຶກສາ ແລະ ວິທະຍາໄລຄູ ແຫ່ງຕ່າງໆ ແນໃສ່ເມື່ອຜູ້ຮຽນ ຮຽນຈົບວິຊາສະເພາະໃດໜຶ່ງແລ້ວ ໃຫ້ມີວຽກເຮັດງານທຳ, ຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ຈາກການລິເລີ່ມວິທີການປະຕິຮູບວິທີການຊັບຊ້ອນ, ສອບເສັງ ທີ່ກ່າວມານັ້ນ ໄດ້ເຮັດໃຫ້ທົ່ວສັງຄົມຄ່ອຍໆຍອມຮັບຕໍ່ກັບການຊັບຊ້ອນເຂົ້າຮຽນໃນລະດັບຕ່າງໆ ແລະ ທາງສຽງຂອງສັງຄົມ ຕໍ່ກັບບັນຫາດັ່ງກ່າວ ກໍຫຼຸດໜ້ອຍຖອຍລົງ.

## II. ສະພາບບັນຫາຂອງການສຶກສາ ກ່ອນ ແລະ ຫຼັງການປະຕິຮູບລະບົບການສຶກສາແຫ່ງຊາດ:

ສະພາບບັນຫາຕົ້ນຕໍຂອງການສຶກສາ ແມ່ນ ການຂະຫຍາຍຕາໜ່າງການສຶກສາໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກຍັງຊັກຊ້າ, ບໍ່ທັນທົ່ວເຖິງ ມີຫຼາຍບ່ອນບໍ່ມີໂຮງຮຽນ ຫຼື ມີໂຮງຮຽນແຕ່ພັດບໍ່ມີຄູສອນ ເຮັດໃຫ້ເດັກໃນເກນອາຍຸເຂົ້າຮຽນບໍ່ໄດ້ເຂົ້າຮຽນຍັງມີຫຼາຍ; ຄຸນນະພາບການສອນຂອງຄູ-ອາຈານຍັງບໍ່ທັນສູງເທົ່າທີ່ຄວນ, ວິທີສິດສອນຂອງຄູອາຈານ ມີລັກສະນະກົນຈັກຕາຍຕົວ, ບໍ່ປະດິດສ້າງ, ບໍ່ທັນມີ

ຫຼາຍຮູບແບບ, ບໍ່ທັນສົ່ງເສີມໃຫ້ຜູ້ຮຽນມີຄວາມຕັ້ງໃຈຄົ້ນຄ້ວາຮໍ່າຮຽນດ້ວຍຕົນເອງ, ຜູ້ເປັນນັກຮຽນກໍ່ບໍ່ເອົາໃຈໃສ່ຕໍ່ຄົ້ນຄວ້າຮໍ່າຮຽນ; ພື້ນຖານໂຄງລ່າງການສຶກສາ ນັບທັງສິ່ງເອື້ອອໍານວຍໃຫ້ການ ຮຽນ-ການສອນຍັງບໍ່ຄົບຖ້ວນ ແລະ ພຽງພໍ ສິ່ງທີ່ມີແລ້ວ ບໍ່ທັນໄດ້ມາດຕະຖານ; ການຈັດສາຍການສຶກສາບໍ່ທັນເປັນລະບົບທີ່ຊັດເຈນ, ການຄຸ້ມຄອງບໍລິຫານການສຶກສາບໍ່ທັນເຂັ້ມແຂງ, ຍັງມີຫຼາຍອັນບໍ່ທັນສອດຄ່ອງກັບການປ່ຽນແປງໃໝ່, ການແບ່ງຄວາມຮັບຜິດຊອບລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນບາງດ້ານບໍ່ທັນຈະແຈ້ງ.

ຈາກບາງສະພາບບັນຫາທີ່ກ່າວມາຂ້າງເທິງນັ້ນ ມັນສົ່ງຜົນກະທົບໂດຍກົງເຖິງຄຸນນະພາບຂອງການສຶກສາ. ຄຸນນະພາບການສຶກສາຂອງພວກເຮົາເວົ້າລວມແລ້ວບໍ່ສູງ ຫຼືວ່າຍັງຕໍ່າ ບັນຫາດັ່ງກ່າວພວກເຮົາເຄີຍເວົ້ານໍາກັນມາເປັນເວລາຫຼາຍສິບປີ ແຕ່ກໍ່ບໍ່ທັນໄດ້ຮັບການແກ້ໄຂ. *ໃນຄວາມເປັນຈິງ ແລ້ວການສຶກສາທີ່ມີຄຸນນະພາບ ມັນສະແດງອອກຢ່າງລວມຍອດຢູ່ທີ່ຊັບພະຍາກອນມະນຸດ ທີ່ພວກເຮົາສ້າງອອກມານັ້ນ ຕ້ອງເປັນຜູ້ທີ່ມີຄວາມຮູ້ ທາງດ້ານວິທະຍາສາດທໍາມະຊາດ, ສັງຄົມ, ມີຄວາມສາມາດຕົວຈິງ ໃນໜ້າທີ່ວິຊາສະເພາະທີ່ໄດ້ຮຽນມາ, ຄວາມຮູ້, ຄວາມສາມາດນັ້ນ ຕ້ອງໃກ້ ຄຽງ ຫຼືເທົ່າທຽມ ກັບລະດັບຂອງສາກົນ ແລະ ພາກພື້ນ; ພ້ອມກັນນີ້ ກໍ່ຍັງເປັນຄົນມີນໍ້າໃຈຮັກຊາດຕິດພັນກັບຮັກລະບອບໃໝ່ ແລະ ມີຄຸນສົມບັດສິນທໍາປະຕິວັດ ກຽມພ້ອມປະກອບສ່ວນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ; ອີກດ້ານ ໜຶ່ງ ຄຸນນະພາບຂອງການສຶກສາທີ່ດີນັ້ນ ຍັງສະແດງອອກທີ່ໂຄງປະກອບຂອງຊັບພະຍາກອນມະນຸດ ທີ່ພວກເຮົາສ້າງອອກມາຕ້ອງສອດຄ່ອງ ແລະ ຕອບສະໜອງກັບໂຄງປະກອບຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ໝາຍຄວາມວ່າ ໂຄງປະກອບການ ສ້າງຊັບພະຍາກອນມະນຸດຕ້ອງເປັນແບບຮູບທາດ.* ເມື່ອພວກເຮົາຖືເອົາສິ່ງດັ່ງກ່າວຂ້າງເທິງນີ້ເປັນຕົວຊີ້ວັດ ມາເບິ່ງໃສ່ສະພາບຊັບພະຍາກອນມະນຸດທີ່ພວກເຮົາສ້າງໃນປະຈຸບັນ ເຫັນວ່າ ຄຸນນະພາບ ຍັງຕໍ່າ ຍັງບໍ່ບັນລຸໄດ້ຕາມຈຸດໝາຍທີ່ພວກເຮົາຕ້ອງການ ສະແດງອອກ: ຄົນທີ່ພວກເຮົາສ້າງອອກມາ ບໍ່ໄດ້ຄຸນນະພາບ ນັບທັງຄຸນນະພາບ ທາງດ້ານຄວາມຮູ້, ຄວາມສາມາດ ແລະ ດ້ານຄຸນສົມບັດ. ຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດ ຂອງຄົນທີ່ພວກເຮົາສ້າງອອກມາ ບໍ່ສົມຄູ່ກັບເນື້ອໃນທີ່ບັນຈຸຢູ່ໃນຫຼັກສູດ, ຮຽນຈົບໄດ້ໃບປະກາດຫຼາຍຂະແໜງວິຊາໃນລະດັບຕ່າງໆ ແຕ່ພາກຕົວຈິງຈໍານວນໜຶ່ງ ເຮັດຫຍັງກໍ່ບໍ່ເປັນ, ທັດສະນະແນວຄິດຄຸນສົມບັດບໍ່ທັນດີ, ບໍ່ທັນໜັກແໜ້ນ ເວົ້າລວມແລ້ວ ຄົນທີ່ພວກເຮົາສ້າງອອກມາບໍ່ບັນລຸໄດ້ຕາມຈຸດປະສົງຄາດໝາຍທີ່ພວກເຮົາຕ້ອງການ, ບໍ່ສາມາດຕອບສະ ໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ຂອງແຕ່ລະທ້ອງຖິ່ນ. ເວົ້າເຖິງໂຄງປະກອບຂອງການສ້າງຄົນບໍ່ທັນສອດຄ່ອງ ບໍ່ເປັນແບບຮູບທາດ ທັງບໍ່ຕອບສະ ໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ. ປະເທດເຮົາເປັນປະເທດດ້ອຍພັດທະນາເພື່ອເຮັດໃຫ້ປະເທດເຮົາລຸດພົ້ນອອກຈາກຄວາມທຸກຍາກ ຈະຕ້ອງມີນັກວິຊາການ, ມີແຮງງານທີ່ມີສີມືໃນຂະແໜງວິຊາຊີບຕ່າງໆໃນລະດັບອັນແນ່ນອນ. ໃນຄວາມເປັນ ຈິງແລ້ວ ກະຊວງສຶກສາທິການ ແລະ ກິລາ ໄດ້ມີຄວາມພະຍາຍາມກໍ່ສ້າງ, ປັບປຸງ ແລະ ຂະຫຍາຍໂຮງຮຽນວິຊາຊີບ, ວິທະຍາໄລເຕັກນິກຢູ່ບັນດາແຂວງ ແລະ ເມືອງຈໍານວນໜຶ່ງທີ່ມີເງື່ອນໄຂ ແຕ່ນັກຮຽນຮຽນຈົບຊັ້ນມັດທະຍົມຕອນຕົ້ນ, ຕອນປາຍບໍ່ສົນໃຈ, ບໍ່ມັກຮຽນວິຊາຊີບ ຊັ້ນຕົ້ນ, ຊັ້ນກາງ, ຜູ້ປົກຄອງ

ນັກຮຽນເອງກໍບໍ່ສົ່ງເສີມໃຫ້ລູກຫຼານຂອງຕົນໄປຮຽນວິຊາໃນລະດັບດັ່ງກ່າວ; ພາກັນໄຝ່ຝັນຢາກຮຽນແຕ່ລະດັບມະຫາວິທະຍາໄລ. ຍ້ອນແນວນັ້ນ, ໂຄງປະກອບຂອງການ ກໍ່ສ້າງບຸກຄະລະກອນ ຈຶ່ງບໍ່ສົມສ່ວນກັນ ລະຫວ່າງ ນັກສຶກສາ ທີ່ຮຽນຢູ່ໂຮງຮຽນວິຊາຊີບ, ວິທະຍາໄລເຕັກນິກ ກັບ ນັກສຶກສາ ທີ່ຮຽນຢູ່ມະຫາວິທະຍາໄລ ແທນທີ່ນັກສຶກສາ ໃນຂົງເຂດອາຊີວະສຶກສາ ຈະຫຼາຍກ່ວານັກສຶກສາໃນມະຫາວິທະຍາໄລ ຊໍ້າພັດກົງກັນຂ້າມ ພັດມີໜ້ອຍກວ່າ ນີ້ສະແດງວ່າ ໃນສັງຄົມພວກເຮົາ ມີຄ່ານິຍົມ ແບບຜິດໆແລ່ນນຳ ແຕ່ກະແສ ຄວາມຮູ້ສຶກ ແລະ ຄ່ານິຍົມອາດຍາດັ່ງເດີມ. ດ້ວຍເຫດຜົນດັ່ງກ່າວ, ປະເທດເຮົາໃນປະຈຸບັນ ຈຶ່ງເກີດມີສະພາບພະນັກງານວິຊາການ ເຫຼືອບໍ່ພໍ, ສະພາບຂາດແຮງງານທີ່ມີສີມືດີ ແລະ ເຫຼືອຜູ້ທີ່ຮຽນຈົບການສຶກສາຊັ້ນສູງ ແລະ ປະລິນຍາຕີ ເຊິ່ງຮຽນຈົບແລ້ວ ບໍ່ມີວຽກເຮັດເປັນຈຳນວນຫຼວງຫຼາຍ ເຮັດໃຫ້ມີສະພາບຫວ່າງງານເກີດຂຶ້ນ. ທັງໝົດທີ່ກ່າວມາຂ້າງເທິງນັ້ນ ເປັນຕົ້ນເຫດພາ ໃຫ້ເກີດມີປະກົດການຫຍໍ້ທໍ້ດ້ານຕ່າງໆຢູ່ໃນຖັນແຖວນັກຮຽນ-ນັກສຶກສາ ສະແດງອອກ: ນັກຮຽນ-ນັກ ສຶກສາຈຳນວນບໍ່ໜ້ອຍທັດສະນະແນວຄິດບໍ່ດີ, ບໍ່ຟັງຄວາມບອກສອນ, ບໍ່ຮູ້ບຸນຄຸນຜູ້ນຳ, ພໍ່ແມ່, ຄູບາອາຈານ, ປ້າລຸງອາວອາ, ຜູ້ອາວຸໂສຊົງຄຸນວຸດທິ, ການນຸ່ງຖື, ການດຳລົງຊີວິດ, ການປະພຶດ ບໍ່ຖືກຕ້ອງ ຕາມປະເພນີອັນດີງາມຂອງຊາດ, ແລ່ນນຳແຕ່ຄ່າ ນິຍົມກະແສທາງ ລົບຂອງສັງຄົມ, ຂີ້ຄ້ານ ຄົ້ນຄ້ວາ ຮ່ຳຮຽນ, ຮຽນອ່ອນ, ແຕ່ຢາກໄດ້ຄະແນນດີ, ຢາກໄດ້ ໃບປະກາດ, ນັກຮຽນ-ນັກສຶກສາຈຳ ນວນໜຶ່ງມົ້ວ ສຸມນຳແຕ່ສິ່ງທີ່ບໍ່ດີ, ໃຊ້ຈ່າຍຫຼິ້ນກິນຟູມເຟືອຍ, ໂສເພນີ, ເສລີເຮຮາຕາມຮ້ານ ເຫຼົ້າຮ້ານເບຍ, ຮ້ານບັນ ເທີງ, ຮ້ານເກມ, ກຸ້ມແກ໊ງ, ແຂ່ງຂັນຊິ່ງລົດ ຕາມຖະໜົນ, ບໍ່ເຄົາລົບນັບຖື, ບໍ່ປະຕິບັດລະບຽບກົດ ໝາຍຂອງບ້ານເມືອງ, ກໍ່ກວນອາລະວາດຕີກັນ, ສ້າງຄວາມວຸ້ນວາຍ ຄວາມບໍ່ສະຫງົບ ໃຫ້ແກ່ສັງຄົມ, ຕິດສິ່ງເສບຕິດ, ເກີດອຸປະຕິເຫດໃນການຂັບຂີ່ ແລະ ອື່ນໆ. ນອກຈາກນັ້ນ ພາຍໃນຂະແໜງການສຶກສາກໍ່ເກີດມີປະກົດການຫຍໍ້ທໍ້ຈຳນວນໜຶ່ງ ທີ່ເປັນການວິພາກວິຈານຈາກສັງຄົມ ເປັນຕົ້ນ ການປອມແປງເອກະສານຢັ້ງຢືນການຮຽນ, ຄວາມບໍ່ໂປ່ງໃສໃນການສອນ-ການຮຽນ, ການສອບເສັງຈົບຊັ້ນ, ສອບເສັງເຂົ້າຮຽນ ນັບທັງໄປຮຽນຢູ່ຕ່າງປະເທດ ແລະ ອື່ນໆ. ທັງໝົດສະພາບບັນຫາຂອງການສຶກສາ ທີ່ກ່າວມານັ້ນເກີດມາຈາກຫຼາຍສາເຫດ ແຕ່ສາເຫດຕົ້ນຕໍ ມີດັ່ງນີ້:

1. ຫຼັກສູດການຮຽນ - ການສອນຂອງພວກເຮົາ ເຖິງວ່າໄດ້ມີການພັດທະນາເປັນແຕ່ລະໄລຍະ ແຕ່ກໍ່ຍັງມີຫຼາຍອັນຍັງບໍ່ທັນສອດຄ່ອງ, ການພັດທະນາຫຼັກສູດໃຫ້ໄປຕາມ ສາມ ລັກສະນະ ແລະ ຫ້າ ຫຼັກມູນຂອງການສຶກສາຍັງບໍ່ທັນຮັບປະກັນໄດ້ໝົດ, ມາໄລຍະໜຶ່ງວິຊາຮຽນຢູ່ຊັ້ນປະຖົມສຶກສາ ພວກເຮົາຖືເບົາວິຊາຄຸນສົມບັດ, ບໍ່ມີຫຼັກສູດວິຊາດັ່ງກ່າວເປັນອັນສະເພາະ, ເອົາວິຊາດັ່ງກ່າວ ໄປຕິດທ້ອຍກັບວິຊາອື່ນ (ວິຊາສຶກສາພົນລະເມືອງ)
2. ຜູ້ສອນ ແລະ ຜູ້ຮຽນ ເຊິ່ງເປັນຂອດຕັດສິນຄຸນນະພາບຂອງການສຶກສາ, ໃນໄລຍະທີ່ຜ່ານມາ ຄູສອນຍັງບໍ່ພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບກໍ່ຍັງບໍ່ທັນດີເທົ່າທີ່ຄວນ, ເງື່ອນໄຂທາງດ້ານເສດຖະກິດ, ຊີວິດການເປັນຢູຂອງຄູພົບຄວາມຫຍຸ້ງຍາກຫຼາຍ, ເງິນເດືອນ, ຄ່າຕອບແທນຕ່າງໆ ຍັງບໍ່ທັນເປັນສິ່ງຈູງໃຈໃຫ້ຄົນຢາກເປັນຄູ. ສຳລັບຜູ້ຮຽນ ມີນັກຮຽນຈຳນວນບໍ່ໜ້ອຍຂີ້ຄ້ານ ມັກງ່າຍບໍ່ເອົາໃຈໃສ່ຄົ້ນຄ້ວາຮ່ຳຮຽນໜັງສື, ອາໄສແຕ່ຜູ້ປົກຄອງຂໍ່ນະໂຍບາຍຕ່າງໆໃຫ້(ຮຽນໃຫ້, ເສັງໃຫ້;

ຊອກເອົາໃບປະກາດໃຫ້ ແລະ ອື່ນໆ)

3. ການລົງທຶນເຂົ້າໃສ່ການສຶກສາຍັງຢູ່ໃນຂອບເຂດຈຳກັດ ຖ້າທຽບໃສ່ມາດຕະຖານສາກົນ ແລະ ຂົງເຂດ ກໍ່ຄືຄວາມຮຽກຮ້ອງຕ້ອງການຕົວຈິງ.
4. ຄອບຄົວ, ພໍ່ແມ່, ປ້າລຸງ ບໍ່ເອົາໃຈໃສ່ ຕັກເຕືອນ, ບອກສອນສຶກສາອົບຮົມແນວຄິດລູກຫຼານຂອງຕົນ, ຂາດຄວາມຮັບຜິດຊອບ, ຂາດການຄຸ້ມຄອງ ຕິດຕາມການໄປມາ, ການດຳລົງຊີວິດຂອງລູກຫຼານຂອງຕົນ, ບາງຄອບຄົວ, ອັນໃດກໍ່ວ່າລູກຫຼານຂອງຕົນດີໝົດ, ປົກປ້ອງເອົາຄວາມຜິດຂອງລູກຫຼານ ທີ່ຜິດກົດໝາຍ, ສົ່ງເສີມລູກຫຼານຂອງຕົນໄປໃນທາງທີ່ບໍ່ຖືກໂດຍບໍ່ຮູ້ສຶກຕົວ, ຜູ້ທີ່ມີຖານະທາງດ້ານເສດຖະກິດແດ່ຍິ່ງສ້າງເງື່ອນ, ອຳນວຍຄວາມສະດວກໃຫ້ແກ່ລູກຫຼານຂອງຕົນ ເຊັ່ນການບໍລິໂພກ ໃຊ້ຈ່າຍເງິນ-ຄຳ, ຊື້ພາຫະນະ, ເຄື່ອງແຕ່ງກາຍທີ່ມີລາແພງ, ລາຄາສູງ ໃຫ້ລູກຫຼານຂອງຕົນນຳໃຊ້ແບບໂຫຼດຜົນ ເກີນຂອບເຂດ ທີ່ເປັນການສິ້ນເປືອງ, ອື່ນໆ...............
5. ໂຮງຮຽນ, ສະຖາບັນການສຶກສາຫຼາຍແຫ່ງບໍ່ໄດ້ຕາມາດຕະຖານ, ບໍ່ເປັນສິ່ງດູດດຶງໃຫ້ຜູ້ຮຽນຮຽນເຕັມເວລາ. ຜູ້ບໍລິຫານ, ຄູອາຈານ ທີ່ສັງກັດຢູ່ໂຮງຮຽນ, ສະຖາບັນການສຶກສາບໍ່ທັນເອົາໃຈໃສ່ຕໍ່ການສຶກສາອົບຮົມແນວຄິດນັກຮຽນ-ນັກສຶກສາ ດ້ວຍຫຼາຍຮູບແບບ, ການສຶກສາອົບຮົມແນວ ຄິດບໍ່ຕິດພັນກັບຊີວິດຕົວຈິງ, ລະບຽບການ, ມາດຕະການ ໃນການຄຸ້ມຄອງໂຮງຮຽນ, ຄຸ້ມຄອງນັກຮຽນ-ນັກສຶກສາ ບໍ່ທັນຮັດກຸມ, ບໍ່ເຂັ້ມງວດ, ບໍ່ເດັດຂາດ, ອີກສ່ວນໜຶ່ງຄູ-ອາຈານສອນຢູ່ໃນໂຮງຮຽນ ຂາດຄວາມເປັນແບບຢ່າງທີ່ດີໃຫ້ແກ່ນັກຮຽນ-ນັກສຶກສາ, ພານັກຮຽນ-ນັກສຶກສາປະພຶດໄປໃນທາງທີ່ບໍ່ຖືກຕ້ອງ, ບາງໂຮງຮຽນ/ສະຖາບັນການສຶກສາ ຈັດຕັ້ງກິດຈະກຳບາງດ້ານ ເປັນການສົ່ງ ເສີມໃຫ້ນັກຮຽນ-ນັກສຶກສາມີແນວຄວາມຄິດໄປທາງທີ່ບໍ່ສອດຄ່ອງເຊັ່ນ ການປະກວດນາງງາມ, ການແຕ່ງຕົວນຸ່ງຖືໃນການແຂ່ງຂັນສິລະປະວັນນະຄະດີມີລັກສະນະບໍ່ສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ທັງມີລັກສະນະຊອດກະຈາ.
6. ລະບຽບຫຼັກການການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໂດຍສະເພາະຢູ່ຂັ້ນບ້ານບໍ່ທັນເຂັ້ມງວດ, ບໍ່ເດັດຂາດ, ບໍ່ສັກສິດ, ບາງບ້ານບໍ່ທັນມີລະບຽບການຄຸ້ມຄອງບ້ານທີ່ຮັດກຸມ, ສິ່ງແວດລ້ອມ ຂອງສັງຄົມຫຼາຍອັນ ສົ່ງຜົນສະທ້ອນໂດຍກົງເຖິງຖັນແຖວນັກຮຽນ-ນັກສຶກສາ. ການຂໍອະນຸມັດ ແລະ ການອະນຸມັດປຸກຮ້ານກິນດື່ມ, ຮ້ານເຫຼົ້າ, ຮ້ານເບຍ, ຮ້ານບັນເທີງ, ຕັ້ງປ້າຍໂຄສະນາຕ່າງໆ ບໍ່ໄດ້ຄຳນຶງເຖິງສະຖານທີ່ຂອງໂຮງຮຽນ, ສ້າງສຽງລົບກວນ, ສິ່ງກີດຂວາງຕໍ່ການຮຽນ-ການສອນ, ປະກົດການຫຍໍ້ທໍ້ດ້ານອື່ນໆ ແຜ່ລາມຫຼາຍຂຶ້ນຢູ່ໃນສັງຄົມ ເຊັ່ນ: ບັນຫາສິ່ງເສບຕິດ, ບັນຫາແຂ່ງຂັນກັນໃຊ້ເຄື່ອງບໍລິໂພກ, ເຄື່ອງໃຊ້ສອຍໃນຊີວິດປະຈຳວັນ, ເຄື່ອງສຳອາງທີ່ມີລາຄາແພງ ສິ່ງດັ່ງກ່າວເປັນ ການດູດດຶງແນວຄິດ ຈິດສຳນຶກນັກຮຽນ-ນັກສຶກສາ ໄປໃນທາງທີ່ບໍ່ຖືກຕ້ອງ, ເກີດມີແນວຄິດມັກມ່ວນຊື່ນແບບເສລີ ເຮຮາ, ຂີ້ຄ້ານຄົ້ນຄວ້າຮ່ຳຮຽນ.

## III. ທິດທາງແກ້ໄຂໃນຕໍ່ໜ້າ :

ໃນຊຸມປີຕໍ່ໜ້ານີ້ (2011-2015) ຂະແໜງການສຶກສາ ແລະ ກິລາ ຈະສຸມໃສ່ດັ່ງນີ້:

1. ຕັ້ງໜ້າຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຂອງລັດຖະບານ ໃນຂົງເຂດວຽກງານການສຶກສາ ແລະ ກິລາ ດ້ວຍຈິດໃຈບຸກທະລຸທັງ 4 ດ້ານໄປພ້ອມໆກັນ ໃຫ້ປະກົດເປັນຈິງຢ່າງເປັນຮູບປະທຳ.
2. ບຸກທະລຸໃຫ້ໄດ້ວຽກງານການພັດທະນາຊັບພະຍາກອນມະນຸດ, ດ້ວຍການສືບຕໍ່ດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ II (2011-2015) ແລະ ປະຕິບັດແຜນຍຸດທະສາດການພັດທະນາກິລາ-ກາຍະກຳ ແຕ່ນີ້ເຖິງປີ 2020 ໃຫ້ເຖິງຖອງ, ມີຫຼັກການ ບົນພື້ນຖານແນວທາງຂອງພັກ, ຮັບປະກັນສາມລັກສະນະການສຶກສາຂອງພັກ ຄື : ລັກສະນະຊາດ, ວິທະຍາສາດ-ທັນສະໄໝ ແລະ ລັກສະນະມະຫາຊົນ ແລະ ຮັບປະກັນ ຫ້າ ຫຼັກມູນການສຶກສາຂອງພັກ ຄື : ຄຸນສົມບັດສຶກສາ, ປັນຍາສຶກສາ, ສິນລະປະສຶກສາ, ພະລະສຶກສາ ແລະ ແຮງງານສຶກສາ. ການປະຕິຮູບການສຶກສາໄລຍະທີ II ນີ້ ແມ່ນສືບຕໍ່ ການປະຕິຮູບລະບົບສາມັນສຶກສາໄລຍະທີ I ທີ່ຍັງບໍ່ທັນສຳເລັດ. ກ້າວສູ່ການປະຕິຮູບລະບົບອາຊີວະສຶກສາ ນັບທັງສາຍສ້າງຄູ ແລະ ການສຶກສາຊັ້ນສູງ ແນ່ໃສ່ຮັບປະກັນດ້ານຄຸນນະພາບ ແລະ ມີຄວາມສອດຄ່ອງ ກັບໂຄງປະກອບ ຂອງການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ. ແກ້ໄຂສະພາບການສຶກສາທີ່ບໍ່ທັນຕອບສະໜອງໄດ້ທາງດ້ານປະລິມານ ກັບຄຸນນະພາບ, ການພັດທະນາການສຶກສາບໍ່ທັນດຳເນີນໄປຕາມແຜນຍຸດທະສາດການສຶກສາແຫ່ງຊາດແທ້, ບໍ່ທັນຕອບສະໜອງໄດ້ຕາມເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດໃນປະຈຸບັນ. ຈັດສັນສາຍການສຶກສາ ໃຫ້ເປັນລະບົບຊັດເຈນ, ມີຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດ, ໝາຍຄວາມວ່າ ຕ້ອງຈັດລະບົບສາຍການສຶກສາແຫ່ງຊາດ ໃຫ້ຄືກັບແບບຮູບທາດ. ( ກະຊວງສຶກສາທິການ ແລະ ກິລາ ມີນະໂຍບາຍ ແລະ ມີຍຸດທະສາດພັດທະນາການສຶກສາໃນແຕ່ດ້ານລະອຽດສົມຄວນເຊັ່ນ: ຍຸດທະສາດການສ້າງຄູ, ຍຸດທະສາດພັດທະນາອາຊີວະສຶກສາ, ຍຸດທະສາດພັດທະນາການສຶກສາຊັ້ນສູງ......ຮູບສະແດງລະບົບການສຶກສາແຫ່ງຊາດ ຊັດຕິດດ້ານຫຼັງ ).
3. ປັບປຸງ, ປ່ຽນແປງວິທີການສອນຂອງຄູ-ອາຈານ ສ້າງທຸກເງື່ອນໄຂໃຫ້ແກ່ຄູ-ອາຈານສອນ ໄດ້ມີໂອກາດພັດທະນາຕົນເອງ ໂດຍສະເພາະແມ່ນພັດທະນາວິທີການສິດສອນທີ່ຫຼາກຫຼາຍ, ປັບປຸງວິທີການຄົ້ນຄ້ວາຮໍ່າຮຽນຂອງນັກຮຽນ ສ້າງຄ່ານິຍົມໃນການສ້າງຄົນໃຫ້ຮຽນດີ-ຮຽນເກັ່ງ, ມີຄວາມດຸໝັ່ນພາກພຽນ, ມີຄວາມມະນະອົດທົນ, ເຫັນຄຸນຄ່າຂອງການຮຽນ, ຄວາມຮູ້ຢູ່ນຳຜູ້ຮຽນ. ໃນຕໍ່ໜ້ານີ້ ຈະສົ່ງເສີມໃຫ້ຄົນເຂົ້າຮຽນຕາມລະດັບຂອງຜູ້ຮຽນ, ຈະບໍ່ອະນຸຍາດໃຫ້ຄົນຜູ້ທີ່ບໍ່ມີລະດັບ, ຜູ້ທີ່ຮຽນອ່ອນ

ຄຸນສົມບັດບໍ່ດີ ເຂົ້າຮຽນໃນລະດັບທີ່ເໜືອກ່ວາຄວາມສາມາດຂອງຜູ້ຮຽນ ໂດຍຈະປັບປຸງປ່ຽນແປງວິທີການເລື່ອນຊັ້ນ ເລື່ອນຊັ້ນ ແລະ ຈົບຊັ້ນ ຕາມມາດຕະຖານຂອງຫຼັກສູດ ແນໃສ່ສ້າງຄົນອອກມາສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດ.

4. ແບ່ງຂັ້ນຄຸ້ມຄອງໂດຍສະເພາະແມ່ນຄວາມຮັບຜິດຊອບ ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ກັບ ບັນດາກະຊວງ, ອົງການຫຼຸບເທົ່າ, ອົງການປົກຄອງທ້ອງຖິ່ນໃຫ້ຈະແຈ້ງ ຕາມທິດສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວ ໜ່ວຍພັດທະນາ: ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບໂດຍກົງການພັດທະນາຫຼັກສູດ, ການກໍ່ສ້າງຄູ, ການສະໜອງປຶ້ມແບບຮຽນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ; ສ່ວນອົງການປົກຄອງທ້ອງຖິ່ນແມ່ນຮັບຜິດ ຊອບສະຖານທີ່, ການກໍ່ສ້າງອາຄານຫ້ອງຮຽນ ແລະ ພື້ນຖານໂຄງລ່າງທີ່ຈຳເປັນອື່ນໆ ໃນນັ້ນ ກະຊວງສຶກສາກໍ່ຈະຮັບຜິດຊອບສ່ວນໜຶ່ງ ໂດຍສະເພາະແມ່ນທຶນຊ່ວຍເຫຼືອຂອງຕ່າງປະເທດ ແລະ ອົງການປົກຄອງທ້ອງຖິ່ນ ກໍຍັງມີສ່ວນຮ່ວມໃນບາງໂຄງການ. ພາຍໃນຂະແໜງການສຶກສາ ແລະ ກິລາເອງ ຕ້ອງໄດ້ແບ່ງຄວາມຮັບຜິດຊອບໃຫ້ລະອຽດຈະແຈ້ງ ກ່ວາເກົ່າເຊັ່ນ: ກະຊວງສຶກສາທິການ ແລະ ກິລາ ມີຄວາມຮັບຜິດຊອບ ໃນການວາງນິຕິກຳ, ນະໂຍບາຍ-ແຜນຍຸດທະສາດ, ລະບຽບຫຼັກການ ໃນການຄຸ້ມຄອງຂັ້ນມະຫາພາກ; ພະແນກສຶກສາທິການ ແລະ ກິລາແຂວງ ຮັບຜິດຊອບໃນການຊີ້ນຳ-ນຳພາການຄຸ້ມຄອງບໍລິຫານ, ເປັນຂອດປະສານ ລະຫ່ວາງ ກະຊວງ ກັບ ອົງການປົກ ຄອງທ້ອງຖິ່ນ, ລະຫວ່າງກະຊວງ ກັບ ຫ້ອງການສຶກສາທິການ ແລະ ກິລາເມືອງ; ຫ້ອງການສຶກສາທິການ ແລະ ກິລາເມືອງຮັບຜິດຊອບປະສານສົມທົບກັບອຳນາດການປົກຄອງຂັ້ນເມືອງ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ພ້ອມກັນຈັດຕັ້ງປະ ຕິບັດຕົວຈິງໃນການພັດທະນາການສຶກສາຢູ່ຂັ້ນຮາກຖານ. ເວົ້າລວມແລ້ວ ການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ທັງສາຍຕັ້ງ ແລະ ສາຍຂວາງ ຕ້ອງຕິດແທັນກັບຄຳສັ່ງແນະນຳຂອງກົມການເມືອງສູນກາງພັກ ສະບັບເລກທີ 03, ລົງວັນທີ 30 / 5 / 2011 ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ຕິແທັນກັບມະຕິຂອງກົມການເມືອງ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວ ໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.

5. ປະສານສົມທົບກັບທຸກພາກສ່ວນໃນສັງຄົມ ແລະ ຄອບຄົວ ເພື່ອແກ້ໄຂປະກົດການຫໍ້ທໍ້ ທີ່ເກີດຂຶ້ນຢູ່ຖັນແຖວນັກຮຽນ-ນັກສຶກສາ ຕົ້ນຕໍກໍ່ຍັງຈະແມ່ນການປະສານສົມທົບແທັນ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງ ຄອບຄົວ, ໂຮງຮຽນ ແລະ ສັງຄົມ ໃຫ້ຈະແຈ້ງ:
   - ນັກຮຽນ-ນັກສຶກສາທຸກຄົນ ລ້ວນແຕ່ກຳເນີດເກີດມາຈາກພໍ່-ແມ່, ທຸກຄົນລ້ວນແຕ່ມີພໍ່-ແມ່, ມີຜູ້ປົກຄອງ ສະນັ້ນ, ຢາກແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນຖັນແຖວນັກຮຽນ-ນັກສຶກສາ

ກ່ອນອື່ນໝົດຕ້ອງເລີ່ມຈາກພໍ່-ແມ່, ຜູ້ປົກຄອງ(ຄອບຄົວ), ຄອບຄົວຕ້ອງມີຄວາມຮັບຜິດຊອບ, ກຳກັບຮັກສາ, ຕິດຕາມການເຄື່ອນໄຫວ ລູກຫຼານຂອງຕົນ ຢ່າງຈິດຈໍ່ໃກ້ສິດ, ເອົາໃຈໃສ່ຕັກເຕືອນ, ສັ່ງສອນ ໃຫ້ໄປທາງທີ່ດີ, ມີປະໂຫຍດໃຫ້ແກ່ສັງຄົມ ບໍ່ຄວນຮັກ ແລະ ເອົາໃຈລູກຫຼານຂອງຕົນໃນທາງ ທີ່ບໍ່ຖືກຕ້ອງ, ບໍ່ຄວນອຳນວຍຄວາມສະດວກ, ສະໜອງການໃຊ້ຈ່າຍໃຫ້ລູກຫຼານຂອງຕົນຫຼາຍເກີນໄປ, ບໍ່ຄວນປົກປ້ອງສິ່ງເສີມຄວາມຜິດ ຂອງລູກຫຼານຕົນເອງ

- ຕ້ອງໄດ້ປັບປຸງລະບຽບຫຼັກການໃນການຄຸ້ມຄອງໂຮງຮຽນ/ສະຖາບັນການສຶກສາ, ປັບປຸງລະບຽບການເຄື່ອນໄຫວ, ການຄຸ້ມຄອງ, ການນຸ່ງຖື, ຂອງນັກຮຽນ-ນັກສຶກສາ, ລະບຽບຄຸ້ມຄອງຫໍພັກ (ສຳລັບໂຮງຮຽນ/ສະຖາບັນ ມີຫໍພັກໃຫ້ນອນ), ປັບປຸງລະບຽບການສອນ, ການເຄື່ອນໄຫວດຳລົງຊີວິດຂອງຄູ, ການຮຽນຂອງນັກຮຽນ, ໃຫ້ຮັດກຸມ, ເຂັ້ມງວດ.
- ໃນທົ່ວສັງຄົມ ຕ້ອງເປັນເຈົ້າການ, ມີຄວາມຮັບຜິດຊອບ ຕໍ່ການເຄື່ອນໄຫວ, ການດຳລົງຊີວິດ, ການໄປມາຂອງນັກຮຽນ-ນັກສຶກສາ, ຄວນປັບປຸງຄືນລະບຽບຫຼັກການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໃຫ້ຮັດກຸມ, ເຂັ້ມງວດ, ຄວນອອກລະບຽບການກ່ຽວກັບການບໍລິການສາທາລະນະ, ບໍ່ຄວນປຸກຮ້ານກິນດື່ມ, ຮ້ານເຫຼົ້າ, ຮ້ານເບຍ, ຮ້ານບັນເທີງ, ຮ້ານເກມ, ສິ່ງທີ່ຈະເປັນການກີດຂວາງລົບກວນຕໍ່ການສອນ-ການຮຽນ, ຕັ້ງປ້າຍໂຄສະນາຕ່າງໆ ຢູ່ໃກ້ກັບໂຮງຮຽນ, ເພີ່ມຄວາມສັກສິດໃນການປະຕິບັດລະບຽບກົດໝາຍ ເຊັ່ນ ຕໍ່ຜູ້ລະເມີດລະບຽບກົດຈໍລະຈອນ, ຕໍ່ຜູ້ທີ່ມີສິ່ງເສບຕິດຢູ່ໃນການຄຸ້ມຄອງ ແລະ ອື່ນໆ ..........

6. ບັນຫາຮີບດ່ວນແມ່ນ ແຕ່ນີ້ຮອດປີ 2015 ປະເທດພວກເຮົາ ຕ້ອງບັນລຸ 9 ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໃນນັ້ນ, ຂະແໜງການສຶກສາ ແລະ ກິລາ ຕ້ອງບັນລຸ 2 ເປົ້າໝາຍ ຄື: ເປົ້າໝາຍທີ 2 ໃຫ້ທຸກຄົນໄດ້ຮັບການສຶກສາຊັ້ນປະຖົມຢ່າງທົ່ວເຖິງ ແລະ ເປົ້າໝາຍທີ 3 ເພດຍິງ ແລະ ເພດຊາຍຕ້ອງມີຄວາມສະເໝີພາບດ້ານການສຶກສາ ໝາຍຄວາມວ່າ ອັດຕາສ່ວນເຂົ້າຮຽນຂອງຜູ້ຍິງ ຕໍ່ຜູ້ຊາຍໃນທຸກຊັ້ນຮຽນຕ້ອງສະເໝີພາບກັນ. ເພື່ອບັນລຸ 2 ເປົ້າໝາຍ ດັ່ງກ່າວ ຂະແໜງການສຶກສາ ແລະ ກິລາ ຕ້ອງສູ້ຊົນເຮັດວຽກດ້ວຍຈິດໃຈບຸກທະລຸ ຕິດພັນກັບ ການແຂ່ງຂັນ ຮັກຊາດພັດທະນາ ແລະ ຍູ້ແຮງການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງ ຂະແໜງການສຶກສາ ໃຫ້ເປັນຮູບປະທຳຢ່າງແທ້ຈິງ ຄື: (1) ແຂ່ງຂັນສອນດີ-ຮຽນເກັ່ງ, (2) ຕ້ານ ແລະ ສະກັດກັ້ນ ປະກົດການ ຫຍໍ້ທໍ້, (3) ສ້າງໂຮງຮຽນ/ສະຖາບັນ ໃຫ້ ມີສິ່ງແວດລ້ອມທີ່ດີ ຕາມ 5 ຫຼັກມູນຂອງການສຶກສາ.
7. ສູ້ຊົນຈັດຕັ້ງປະຕິບັດງົບປະມານຂະແໜງການສຶກສາ ແລະ ກິລາ ໃຫ້ໄດ້ 17-18% ຂອງລາຍຈ່າຍງົບປະມານຂອງລັດຖະບານ ໃຫ້ປະກົດເປັນຈິງ ພ້ອມນັ້ນ ກໍ່ຂໍການສະໜັບສະໜູນຊ່ວຍເຫຼືອຈາກອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ພາກເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມການພັດທະນາການສຶກສາ ແລະ ກິລາ ຕາມຈຸດໝາຍ ທີ່ພັກ ແລະ ລັດຖະບານເຮົາໄດ້ກຳນົດໄວ້.

## IV. ຂໍ້ສະເໜີ:

1. ຂໍໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ຜູ້ແທນກອງປະຊຸມ ມີຄວາມເປັນເອກະພາບໃນລະກັບສູງ ນຳບັນຫາຂອງການສຶກສາດ້ວຍຈິດໃຈບຸກທະລຸ.
2. ຂໍໃຫ້ສະມາຊິກສະພາແຫ່ງຊາດປະຈຳຢູ່ແຕ່ລະເຂດເລືອກຕັ້ງ ຊ່ວຍປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນຊັບຊ້ອນ ຈັດສັນງົບປະມານ ໃຫ້ຂະແໜງການສຶກສາ ໃຫ້ໄດ້ຕາມການອະນຸມັດຂອງສະພາແຫ່ງຊາດ.
3. ຂໍໃຫ້ສະມາຊິກສະພາແຫ່ງຊາດຊ່ວຍຕິດຕາມ ຊຸກຍູ້ການຮຽນ-ການສອນຢູ່ຕາມສະຖາບັນການສຶກສາ ລະດັບຕ່າງໆທັງພາກລັດ ແລະ ພາກເອກະຊົນ ໃຫ້ໄປລວງດຽວ ກັນ ແລະ ຖືກກັບ ລະບຽບຫຼັກການທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

ໃນສ່ວນຂອງຂະແໜງການສຶກສາ ແລະ ກິລາ ຍິນດີຮັບເອົາການປະກອບຄຳເຫັນ, ຕຳນິສິ່ງຂ່າວຈາກສະມາຊິກສະພາແຫ່ງຊາດ, ຜູ້ແທນກອງປະຊຸມ ກໍຄືໃນທົ່ວສັງຄົມ ເພື່ອຈະນຳ ໄປປັບປຸງແກ້ໄຂ.

ສຸດທ້າຍນີ້, ຂໍອວຍພອນທ່ານປະທານ, ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ຜູ້ແທນກອງປະຊຸມ ທຸກໆທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສຳເລັດໃນໜ້າທີ່ວຽກງານຂອງຕົນ ແລະ ຂໍອວຍພອນໃຫ້ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VII ຈົ່ງ ປະສົບຜົນສຳເລັດ ຢ່າງສະຫງ່າງາມ.

ຂໍຂອບໃຈ !

---

# ລະບົບ ການສຶກສາ ຂອງ ສ ປ ປລາວ

